# ແດ່ບຸນກວ້າງ

ໂດຍ: ບ່າວຫຼັກເຈັດ

ເຫັນຈົດຫມາຍບຸນກວ້າງ ເພິ່ນເປັນຫ່ວງຫວງຖາມ ມາແລ້ວ
ຄອຍຕິດຕາມຜົລງານ ອ່ານຂ່າວຄາວເຮົາທາງພີ້
ຫຼືວ່າມີການຮ້ອນ ສິນລະວິນຫຍຸ້ງຍາກ ຊັ້ນບໍ?
ຝາກຄວາມຢາມທຸກໆທ່ານ ອາຈານພ້ອມເພື່ອນຝູງ ແນ່ເດີ

ບຸນກ້ວາງເອີຍ... ອາທິດຫຼັງມີວຽກຫຍຸ້ງ ດຶງແກ່ໃຫ້ສັບສົນ
ສາຣະວິນບຸກງານຫນັກ ຈຶ່ງພັກກາຍເຊົາຢັ້ງ
ທາງໂຮງງານກໍພອຍເຮັ້ງ ນາຍພັດເລັ່ງສັ່ງວຽກອອກ
ຊອກຊ່ອງທາງເຮັດໃຫ້ແລ້ວ ແນວນາຍຊີ້ສັ່ງການ ຊັ້ນແລ້ວ

ສ່ວນວ່າວຽກຢູ່ບ້ານ ກໍພັດຫນ່ຳມາເຕີມ ອີ່ຫຼືໃດ
ເພີ້ມຕື່ມຄວາມເຈັບຫົວ ປວດຂມົວສົມຄວນແທ້
ຈຶ່ງໄດ້ຫາເວລາແກ້ ເຫມືອນກັບແພບໍ່ມີທໍ່
ລໍຜູ້ມາຊຸກຍູ້ ໃຫ້ຟູນ້ຳລ່ອງໄປ ຊັ້ນແລ້ວ

ສະນັ້ນ, ຫຼາຍໆວັນເຮົາຈຶ່ງໄດ້ ເຫີນຫ່າງທາງຄຳກອນ
ບໍ່ໄດ້ສັນຈອນຫນີ ຫຼືຫ່າງຫາຍໄປຫນ້າ
ຍັງຫ່ວງຫາຊຸມເຈົ້າ ຊາວຫຼັກເຈັດທຸກໆທ່ານ ຢູ່ເດີ
ຂອບໃຈນຳຜູ້ອ່ານ ພ້ອມມີສາລສິ່ງຍ້ອງ ຮັບຮອງໄດ້ວ່າບໍ່ຫນີ....

ການກັບມາເທື່ອນີ້ ມີນ້ອງໃຫມ່ມາຂຽນກອນ ເພີ້ມແລ້ວ
ສີພັນດອນບົວກາງວັນ ຂັ້ນອາຈານຣະດັບນ້ອງ
ທຸກຄືນຄອງຄອຍຖ້າ ຜົລງານນາງມາໂມດໃຫມ່

ສາວຫຼັກເຈັດຈາກໄປ ສີພັນດອນຊື່ກ້ອງ ມາແທນຫມ້ອງບໍ່ຫ່າງເຫີນ ແທ້ແລ້ວ